ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສາທາລະນະສຸກແຂວງ
ໂຮງໝໍແຂວງຈຳປາສັກ

ເລກທີ 0046 /ຮໝຂ.ຈສ

ແຂວງຈຳປາສັກ,ວັນທີ 16 ມັງກອນ 2026

## ໜັງສືແຈ້ງການປະມູນ

ເຖິງ: ບໍລິສັດ, ຫ້າງຮ້ານ, ຜູ້ປະກອບການທຸລະກິດຂາຍເຄື່ອງຫ້ອງການ ແລະ ເຄື່ອງອຸປະໂພກ (ເຄື່ອງເຮັດອະນາໄມ)

ເລື່ອງ: ປະມູນຈັດຊື້ເຄື່ອງຮັບໃຊ້ຫ້ອງການ ແລະ ເຄື່ອງຮັບໃຊ້ເຮັດອະນາໄມປະຈຳປີ 2026

- ອີງຕາມ ກົດໝາຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30 / ສພຊ ລົງວັນທີ 02 ພະຈິກ 2017
- ອີງຕາມ ຄຳແນະນຳ ເລກທີ 477 / ກງ ລົງວັນທີ 13 ກຸມພາ 2019 ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນລັດ.
- ອີງຕາມ ການຕົກລົງເຫັນດີເປັນເອກກະພາບຂອງຄະນະອຳນວຍການໂຮງໝໍແຂວງຈຳປາສັກ

ຄະນະອຳນວຍການໂຮງໝໍແຂວງຈຳປາສັກ ມີຄວາມຍິນດີ ແລະ ຂໍແຈ້ງມາຍັງ ບໍລິສັດ, ຫ້າງຮ້ານ, ຜູ້ປະກອບການທຸລະກິດຂາຍເຄື່ອງຫ້ອງການ ແລະ ເຄື່ອງອຸປະໂພກ ທີ່ຢູ່ພາຍໃນແຂວງຈຳປາສັກ ແລະ ຕ່າງແຂວງເຂົ້າຮ່ວມການປະມູນ ເຊິ່ງມີລາຍລະອຽດລຸ່ມນີ້.

1. ປະເພດການປະມູນມີຄື:

   1.1 ເຄື່ອງຮັບໃຊ້ຫ້ອງການ ແລະ ຮັບໃຊ້ການພິມ

   1.2 ເຄື່ອງຮັບໃຊ້ການອະນາໄມ

2. ເງື່ອນໄຂຂອງບັນດາ ບໍລິສັດ ແລະ ຫ້າງຮ້ານ ທີ່ຈະເຂົ້າຮ່ວມດັ່ງນີ້:

   2.1 ມີໃບທະບຽນວິສາຫະກິດ ( ຕ້ອງຊື່ເຈົ້າຂອງເອງ )

   2.2 ມີໃບອະນຸຍາດດຳເນີນທຸລະກິດ ( ຕ້ອງຊື່ເຈົ້າຂອງເອງ )

   2.3 ໃບຢັ້ງຢືນການມອບອາກອນປະຈຳປີ ( ປີຜ່ານມາ )

   2.4 ໃບຍັ້ງຢືນເຂົ້າສູລະບົບອາກອນມູນຄ່າເພີ່ມ.

   2.5 ເງື່ອນໄຂອື່ນ ( ຕ້ອງສົ່ງໃຫ້ໄດ້ເປັນປົກກະຕິ ແລະ ລໍຖ້າທາງໂຮງໝໍສຳລະເງິນເປັນງວດ 1-3 ເດືອນ )

ດັ່ງນັ້ນ, ຈຶ່ງແຈ້ງ ບໍລິສັດ, ຫ້າງຮ້ານ ແລະ ຜູ້ປະກອບການທຸລະກິດຂາຍ ເຄື່ອງຮັບໄຊ້ຫ້ອງການ ແລະ ເຄື່ອງເຮັດອະນາໄມ ທີ່ມີຄວາມສົນໃຈຢາກເຂົ້າຮ່ວມການປະມູນຈັດຊື້ໃນຄັ້ງນີ້ ຂໍເຊີນທ່ານເຂົ້າມາພົວພັນຊື້ເອົາຊອງປະມູນນຫ້ອງການບໍລິຫານຄຸ້ມຄອງຊັ້ນ 2 ທີ່ໂຮງໝໍແຂວງຈຳປາສັກ ໃນໂມງລັດຖະການ ຕອນເຊົ້າເລີ່ມແຕ່ 9 ໂມງ 00 – 11 ໂມງ 30, ຕອນບ່າຍແຕ່ 13 ໂມງ 30 – 15 ໂມງ 30 ເລີ່ມຂາຍແຕ່ວັນທີ 19 / 01 / ຫາ 24 / 02 / 2026. ( ລາຄາຊອງປະມູນ 300,000 ກີບ / ຊອງ ) ປິດຂາຍຊອງປະມູນ 16 ໂມງ 00 ຂອງວັນທີ 24 / 02/ 2026 ມື້ເປີດຊອງປະມູນແມ່ນວັນທີ 26 / 02 / 2026 ເວລາ 9 ໂມງ 00 – 10ໂມງ 00 ສະຖານທີຫ້ອງປະຊຸມ 12 ພຶດສະພາ ( ຫ້ອງປະຊຸມນ້ອຍ ) ຂອງໂຮງໝໍແຂວງຈຳປາສັກຊັ້ນ 2

ຫວັງຢ່າງຫຍິ່ງວ່າ ທ່ານຈະສະຫຼະເວລາ ແລະ ສົນໃຈຕໍ່ກັບການເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຮອງຫົວໜ້າ ... ຜູ້ອຳນວຍການ

ດຣ ກິດສະແຫວງ ສີສຸລາດ

Dr Khitsaveng SISOULATH

สแกนด้วย CamScanner